ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 470/ລບ

ນະຄອນຫຼວງວຽງຈັນ, ວັນທີ 27.12.2019

# ດຳລັດ
# ວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1823/ອຄ.ຫອຄ, ລົງວັນທີ 17 ທັນວາ 2019.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການດຳເນີນທຸລະກິດຍານພາຫະນະທາງບົກ ຢູ່ ສປປ ລາວ ເພື່ອເຮັດໃຫ້ທຸລະກິດດັ່ງກ່າວດຳເນີນຢ່າງຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ດຳເນີນທຸລະກິດ, ຜູ້ຊົມໃຊ້ ແລະ ຜົນປະໂຫຍດຂອງລັດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຄຸ້ມຄອງທຸລະກິດຍານພາຫະນະທາງບົກ**

ການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ແມ່ນ ການກຳນົດ ເງື່ອນໄຂ, ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຕິດຕາມ ກວດກາ ການດຳເນີນທຸລະກິດ ຍານພາຫະນະທາງບົກ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທຸລະກິດຍານພາຫະນະທາງບົກ** ໝາຍເຖິງ ການດຳເນີນທຸລະກິດ ກ່ຽວກັບ ການນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຜະລິດ ແລະ ການປະກອບຍານພາຫະນະທາງບົກ;

2. **ຍານພາຫະນະທາງບົກ** ໝາຍເຖິງ ພາຫະນະທີ່ແລ່ນດ້ວຍເຄື່ອງຈັກຕາມເສັ້ນທາງບົກ ທີ່ມີສອງລໍ້ ຂຶ້ນໄປ;

3. **ຍານພາຫະນະທາງບົກທີ່ນຳໃຊ້ແລ້ວ** ໝາຍເຖິງ ຍານພາຫະນະທີ່ຜ່ານການການນຳໃຊ້ມາແລ້ວ ໄດ້ນຳມາ ຂາຍ ຫຼື ໂອນ ໃຫ້ບຸກຄົນອື່ນນຳໃຊ້ຕໍ່;

4. **ສະຖານທີ່ວາງຈຳໜ່າຍຍານພາຫະນະທາງບົກ** ໝາຍເຖິງ ສະຖານທີ່ວາງສະແດງ ແລະ ຈຳໜ່າຍ ຍານພາຫະນະ ທີ່ປຸກສ້າງຖືກຕ້ອງຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;

5. **ຊິ້ນສ່ວນຍານພາຫະນະທາງບົກ** ໝາຍເຖິງ ສ່ວນປະກອບຂອງຍານພາຫະນະທາງບົກ ທີ່ເປັນຊິ້ນດຽວ, ຊິ້ນສ່ວນທີ່ປະກອບສົມບູນ ແລະ ຊິ້ນສ່ວນທີ່ປະກອບຍັງບໍ່ທັນສົມບູນ ທີ່ນຳໃຊ້ເພື່ອປະກອບເປັນພາຫະນະທີ່ສົມບູນ;

6. **ເອັສເຄດີ Semi Knocked Down (SKD)** ໝາຍເຖິງ ຊິ້ນສ່ວນທີ່ບໍ່ແມ່ນຊິ້ນດຽວ ຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນບໍ່ລະອຽດ ໂດຍປະມານ ຫ້າສິບສ່ວນຮ້ອຍ (50%) ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ;

7. **ຊີເຄດີ Completely Knocked Down (CKD)** ໝາຍເຖິງ ຊິ້ນສ່ວນຢູ່ໃນຮູບ ຮ່າງລັກ ສະນະທີ່ແກະ ແລະ ແຍກອອກຈາກກັນລະອຽດ ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ ຍົກເວັ້ນແຕ່ພາກ ສ່ວນຈັກ ຫຼື ໝໍ້ໄຟ ສຳລັບຍານພາຫະນະໄຟຟ້າ ຈາກຕ່າງປະເທດທີ່ນຳເຂົ້າ ເພື່ອປະກອບຢູ່ໂຮງງານໃນ ສປປ ລາວ;

8. **ໄອເຄດີ Incompletely Knocked Down (IKD)** ໝາຍເຖິງ ຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນແບບຊີເຄດີ (CKD) ຈາກຕ່າງປະເທດທີ່ນຳເຂົ້າ ເພື່ອປະກອບຢູ່ໂຮງງານແຕ່ບໍ່ຄົບຊຸດ ຊຶ່ງມີຊິ້ນສ່ວນ ແລະ ອາໄຫຼ່ຈຳນວນໜຶ່ງ ແມ່ນໄດ້ຮັບການຜະລິດ ແລະ ຕົບແຕ່ງຢູ່ພາຍໃນປະເທດ;

9. **ໃບມອບສິດຈາກບໍລິສັດແມ່** ໝາຍເຖິງ ເອກະສານຢັ້ງຢືນການໃຫ້ສິດໃນການນຳເຂົ້າ,ສົ່ງອອກ, ເປັນຕົວແທນຈຳໜ່າຍ, ຜະລິດຊິ້ນສ່ວນຂອງຍານພາຫະນະ, ຜະລິດ ແລະ/ຫຼື ປະກອບ ຍານພາ ຫະນະທາງບົກ.

## ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງທຸລະກິດຍານພາຫະນະທາງບົກ

ລັດ ຮັບຮູ້ ແລະ ປົກປ້ອງສິດໃນການດຳເນີນທຸລະກິດຍານພາຫະນະທາງບົກຂອງທຸກພາກສ່ວນເສດຖະກິດ ໃຫ້ດຳເນີນຕາມກົດໝາຍ ແລະ ລະບຽບການ.

ລັດ ສົ່ງເສີມການນຳໃຊ້ຍານພາຫະນະທາງບົກ ທີ່ນຳໃຊ້ພະລັງງານສະອາດ ແລະ ເປັນມິດກັບສິ່ງແວດລ້ອມ ເຊັ່ນ ພະລັງງານໄຟຟ້າ, ພະລັງງານແສງຕາເວັນ, ພະລັງງານເຊື້ອໄຟຊີວະພາບ ເພື່ອຫຼຸດຜ່ອນການນຳໃຊ້ຍານພາຫະນະທີ່ສົ່ງ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສອດຄ່ອງຕາມຍຸດທະສາດພັດທະນາສີຂຽວ.

ລັດ ສົ່ງເສີມການຜະລິດພາຍໃນ ເປັນຕົ້ນ ການຜະລິດຍານພາຫະນະ, ຜະລິດຊິ້ນສ່ວນຍານພາຫະນະ ແລະ ການປະກອບຍານພາຫະນະ ດ້ວຍການໃຫ້ນະໂຍບາຍດ້ານພາສີ, ອາກອນ ແລະ ນະໂຍບາຍອື່ນຕາມກົດໝາຍ.

## ມາດຕາ 5 ຫຼັກການກ່ຽວກັບທຸລະກິດຍານພາຫະນະທາງບົກ

ການດຳເນີນທຸລະກິດຍານພາຫະນະທາງບົກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;

2. ຄຸ້ມຄອງ ແລະ ດັດສົມຫົວໜ່ວຍທຸລະກິດຍານພາຫະນະທາງບົກ ຕາມກົນໄກຕະຫຼາດໃນແຕ່ລະໄລຍະ ພ້ອມທັງຈຳກັດຈຳນວນ ການນຳໃຊ້ຍານພາຫະນະ ເພື່ອບໍ່ໃຫ້ກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

3. ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ດຳເນີນທຸລະກິດ, ຜູ້ຊົມໃຊ້ ແລະ ຜົນປະໂຫຍດຂອງລັດ;

4. ສອດຄ່ອງ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ;

5. ສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຍານພາຫະນະທາງບົກ ຢູ່ ສປປ ລາວ ແຕ່ບໍ່ກວມເອົາການນຳເຂົ້າຍານພາຫະນະທາງບົກ ທີ່ນຳເຂົ້າມາເພື່ອຮັບໃຊ້ວຽກງານວິຊາການໂດຍສະເພາະ.

## ພາກທີ II
## ປະເພດທຸລະກິດຍານພາຫະນະທາງບົກ

**ມາດຕາ 7 ປະເພດທຸລະກິດຍານພາຫະນະທາງບົກ**

ທຸລະກິດຍານພາຫະນະທາງບົກມີ ສາມ ປະເພດຄື:

1. ທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ;
2. ທຸລະກິດການຈຳໜ່າຍຍານພາຫະນະທາງບົກ;
3. ທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ.

**ມາດຕາ 8 ທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ**

ທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການນຳເຂົ້າຍານພາຫະນະທາງບົກ ເພື່ອຂາຍຍົກໃຫ້ຜູ້ດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ, ສົ່ງອອກຕໍ່, ເປັນຕົວແທນ ຫຼື ຊື້ຍານພາຫະນະທາງບົກຈາກ ຜູ້ຜະລິດ, ປະກອບຍານພາຫະນະທາງບົກ ຢູ່ ສປປ ລາວ ເພື່ອຈຳໜ່າຍ ຢູ່ ພາຍໃນ ຫຼື ສົ່ງອອກໄປຕ່າງປະເທດ.

ຜູ້ດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ຕ້ອງມີໃບມອບສິດຈາກບໍລິສັດແມ່. ໃນກໍລະນີ ຕ້ອງການຂາຍຍ່ອຍຢູ່ພາຍໃນ ຕ້ອງປະຕິບັດຕາມເງື່ອນໄຂທີ່ກຳນົດໃນມາດຕາ 22 ຂອງດຳລັດສະບັບນີ້.

**ມາດຕາ 9 ທຸລະກິດການຈຳໜ່າຍຍານພາຫະນະທາງບົກ**

ທຸລະກິດການຈຳໜ່າຍຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບ ການຂາຍຍົກ, ຂາຍຍ່ອຍຍານພາຫະນະທາງບົກໃໝ່ ແລະ/ຫຼື ຍານພາຫະນະທາງບົກທີ່ນຳໃຊ້ແລ້ວ ທີ່ສາມາດຂາຍ ຫຼື

ເປັນຕົວແທນຈຳໜ່າຍຍານພາຫະນະທາງບົກ ຍີ່ຫໍ້ໃດໜຶ່ງ ຫຼື ຫຼາຍຍີ່ຫໍ້ ຊຶ່ງບໍ່ສາມາດນຳເຂົ້າ ແລະ ສົ່ງອອກໄດ້.

**ມາດຕາ 10 ທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ**

ທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການຜະລິດ ຫຼື ປະກອບ ຫຼື ທັງຜະລິດ ແລະ ປະກອບຍານພາຫະນະທາງບົກ ໂດຍຜະລິດ, ນຳເຂົ້າ ຫຼື ຊື້ຊິ້ນສ່ວນ ຈາກຜູ້ຜະລິດຢູ່ພາຍໃນ ຈຳນວນໜຶ່ງ ຫຼື ທັງໝົດ ເພື່ອປະກອບເປັນຍານພາຫະນະທາງບົກສົມບູນ ແລ້ວຈຳໜ່າຍຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ.

ທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ສາມາດຂາຍຍົກໃຫ້ຜູ້ດຳເນີນທຸລະກິດຈຳໜ່າຍຢູ່ພາຍໃນ ແລະ ສາມາດສົ່ງອອກໂດຍກົງ. ໃນກໍລະນີຕ້ອງການຂາຍຍ່ອຍ ຕ້ອງປະຕິບັດຕາມເງື່ອນໄຂທີ່ກຳນົດໃນມາດຕາ 22 ຂອງດຳລັດສະບັບນີ້.

## ພາກທີ III
## ການສ້າງຕັ້ງ ແລະ ການດຳເນີນທຸລະກິດຍານພາຫະນະທາງບົກ

### ໝວດທີ 1
### ການສ້າງຕັ້ງ ແລະ ການດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ

**ມາດຕາ 11 ຂັ້ນຕອນການສ້າງຕັ້ງ ແລະ ການດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ**

ການສ້າງຕັ້ງ ແລະ ການດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ໃຫ້ປະຕິບັດຕາມ ຂັ້ນຕອນ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ;
2. ຂໍອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ.

**ມາດຕາ 12 ການແຈ້ງຂຶ້ນທະບຽນວິສາຫະກິດຂອງທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ທຶນຈົດທະບຽນຂອງວິສາຫະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ໃຫ້ປະຕິບັດດັ່ງນີ້:

1. ສີ່ຕື້ ກີບ ຂຶ້ນໄປ ສຳລັບຍານພາຫະນະທາງບົກ ທີ່ມີສອງ ຫຼື ສາມລໍ້;
2. ຫ້າສິບຕື້ ກີບ ຂຶ້ນໄປ ສຳລັບຍານພາຫະນະທາງບົກ ທີ່ມີສີ່ລໍ້ ຂຶ້ນໄປ.

**ມາດຕາ 13 ການຂໍອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ**

ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ກ່ອນເຄື່ອນໄຫວທຸລະກິດ ຕ້ອງຂໍອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ຕາມລະບຽບການ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ວາງອອກ.

ການສະເໜີອອກໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ປະກອບມີ ເອກະສານຕົ້ນຕໍ ຄືດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມແບບພິມ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ;

2. ເອກະສານການມອບສິດໃຫ້ເປັນຜູ້ນຳເຂົ້າຍານພາຫະນະ ຈາກບໍລິສັດແມ່ ຫຼື ສາຂາທີ່ໄດ້ຮັບມອບສິດຈາກບໍລິສັດແມ່;

3. ໃບທະບຽນວິສາຫະກິດ;

4. ໜັງສືແນະນຳການຂໍອະນຸຍາດດຳເນີນທຸລະກິດ ທີ່ອອກໂດຍ ພາກສ່ວນອອກໃບທະບຽນວິສາຫະກິດ.

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ເຈົ້າໜ້າທີ່ກ່ຽວຂ້ອງຕ້ອງອອກໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ຊ້າສຸດບໍ່ໃຫ້ເກີນ ຫ້າ ວັນ ລັດຖະການ ນັບແຕ່ມື້ອອກໃບຮັບເອກະສານເປັນຕົ້ນໄປ.

**ມາດຕາ 14 ເງື່ອນໄຂການດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ**

ຕະຫຼອດໄລຍະເວລາໃນການດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ທີ່ຍັງມີຜົນໃຊ້ໄດ້;

2. ມີໃບມອບສິດຈາກບໍລິສັດແມ່ ທີ່ຍັງມີຜົນໃຊ້ໄດ້;

3. ຖືບັນຊີຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ມີບັນຊີເງິນຝາກຢູ່ທະນາຄານ ທີ່ຕັ້ງຢູ່ ສປປ ລາວ ແລະ ການຊື້-ຂາຍຍານພາຫະນະທາງບົກຕ້ອງຊຳລະຜ່ານທະນາຄານ;

5. ມີສະຖານທີ່ໃຫ້ບໍລິການຫຼັງການຂາຍ ຫຼື ມີຕົວແທນຈຳໜ່າຍ ທີ່ສາມາດໃຫ້ບໍລິການຫຼັງການຂາຍ ທີ່ມີອາໄຫຼ່ ແລະ ອຸປະກອນຮອງຮັບການໃຫ້ບໍລິການຫຼັງການຂາຍຢ່າງພຽງພໍ, ມີນາຍຊ່າງກົນຈັກສະເພາະດ້ານ ທີ່ມີໃບຢັ້ງຢືນຜ່ານຫຼັກສູດການຮຽນ ຫຼື ຝຶກອົບຮົມການສ້ອມແປງ ຢ່າງໜ້ອຍ ສອງຄົນຂຶ້ນໄປ.

ວິສາຫະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ທີ່ໄດ້ຮັບການສ້າງຕັ້ງ ແລະ ດຳເນີນກ່ອນດຳລັດສະບັບນີ້ ຕ້ອງປັບປຸງໃຫ້ສອດຄ່ອງ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕານີ້ ພາຍໃນ ກຳນົດເວລາ ໜຶ່ງ ປີ ນັບແຕ່ວັນທີ່ ດຳລັດສະບັບນີ້ ມີຜົນບັງຄັບໃຊ້ເປັນຕົ້ນໄປ.

**ມາດຕາ 15 ການນຳເຂົ້າຍານພາຫະນະທາງບົກ**

ການນຳເຂົ້າຍານພາຫະນະທາງບົກ ຕ້ອງດຳເນີນໂດຍວິສາຫະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ກຳນົດໃນມາດຕາ 14 ຂອງດຳລັດສະບັບນີ້.

ການນຳເຂົ້າຍານພາຫະນະທາງບົກແຕ່ລະຄັນ ຕ້ອງມີແຫຼ່ງທີ່ມາຊັດເຈນ, ນຳເຂົ້າຜ່ານດ່ານຊາຍແດນສາກົນ ແລະ ໄດ້ຮັບອະນຸຍາດຈາກ ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍຖືກຕ້ອງຕາມມາດຕະຖານເຕັກນິກ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

### ມາດຕາ 16 ການສົ່ງອອກຍານພາຫະນະທາງບົກ

ການສົ່ງອອກຍານພາຫະນະທາງບົກ ຕ້ອງດຳເນີນໂດຍວິສາຫະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ, ຜູ້ຜະລິດ ແລະ/ຫຼື ຜູ້ປະກອບຍານພາຫະນະທາງບົກ ທີ່ສ້າງຕັ້ງ ຢູ່ ສປປ ລາວ.

ການສົ່ງອອກຍານພາຫະນະທາງບົກ ແຕ່ລະຄັ້ງ ຕ້ອງສົ່ງອອກຜ່ານດ່ານສາກົນ ແລະ ສອດຄ່ອງກັບມາດຕະຖານເຕັກນິກຂອງປະເທດນຳເຂົ້າ.

### ມາດຕາ 17 ການນຳເຂົ້າຍານພາຫະນະທາງບົກເພື່ອສົ່ງອອກຕໍ່

ການນຳເຂົ້າຍານພາຫະນະທາງບົກເພື່ອສົ່ງອອກຕໍ່ ແມ່ນ ການນຳເຂົ້າຍານພາຫະນະທາງບົກ ເຂົ້າມາໃນ ສປປ ລາວ ແລະ ນຳໄປເກັບໄວ້ຢູ່ສາງສິນຄ້າ ທີ່ຂະແໜງການກ່ຽວຂ້ອງໄດ້ກຳນົດ ຫຼື ຄ່ຽນຖ່າຍ ແລ້ວສົ່ງອອກຕໍ່ ຊຶ່ງບໍ່ສາມາດຈຳໜ່າຍ, ຂຶ້ນທະບຽນ ແລະ ນຳໃຊ້ ຢູ່ ສປປ ລາວ ໄດ້.

ການນຳເຂົ້າຍານພາຫະນະທາງບົກເພື່ອສົ່ງອອກຕໍ່ ຕ້ອງດຳເນີນໂດຍວິສາຫະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ກຳນົດໃນມາດຕາ 14 ຂອງດຳລັດສະບັບນີ້ ແລະ ຕ້ອງໄດ້ຮັບການເຫັນດີຈາກບໍລິສັດແມ່.

ການນຳເຂົ້າຍານພາຫະນະທາງບົກເພື່ອສົ່ງອອກຕໍ່ແຕ່ລະຄັ້ງ ຕ້ອງເຊັນສັນຍາຄ້ຳປະກັນກັບ ກະຊວງການເງິນ ແລະ ໄດ້ຮັບອະນຸຍາດຈາກ ກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງຕ້ອງນຳເຂົ້າ, ສົ່ງອອກ ຜ່ານດ່ານສາກົນ, ຂົນສົ່ງຕາມເສັ້ນທາງທີ່ໄດ້ກຳນົດໄວ້ ແລະ ຕ້ອງສົ່ງອອກພາຍໃນ ສີ່ສິບຫ້າ ວັນ ນັບ ແຕ່ວັນນຳເຂົ້າ ແລະ ຕ້ອງສົ່ງອອກຄົບຕາມຈຳນວນທີ່ນຳເຂົ້າ ໂດຍມີການຢັ້ງຢືນຈາກ ກະຊວງການເງິນ. ຖ້າບໍ່ສາມາດສົ່ງອອກຕໍ່ ພາຍໃນກຳນົດເວລາດັ່ງກ່າວ ສາມາດສະເໜີ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຂໍຕໍ່ເວລາໄດ້ ແຕ່ສູງສຸດ ບໍ່ໃຫ້ກາຍ ສິບຫ້າ ວັນ. ຖ້າກາຍກຳນົດເວລາດັ່ງກ່າວ ແຕ່ຍັງບໍ່ສາມາດ ສົ່ງອອກຄົບຕາມຈຳນວນທີ່ນຳເຂົ້າ ຕ້ອງເສຍພາສີ, ອາກອນ ແລະ ພັນທະອື່ນ ຄືກັນກັບການນຳເຂົ້າ ເພື່ອຈຳໜ່າຍຢູ່ພາຍໃນ.

ເອກະສານສະເໜີຂໍນຳເຂົ້າເພື່ອສົ່ງອອກຕໍ່ ປະກອບມີສັນຍາບໍລິການຂົນສົ່ງ, ສັນຍາຊື້-ຂາຍຕົ້ນທາງ ແລະ ປາຍທາງ ພ້ອມດ້ວຍເອກະສານອື່ນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການສ້າງຕັ້ງ ແລະ ການດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ

### ມາດຕາ 18 ຂັ້ນຕອນການສ້າງຕັ້ງ ແລະ ການດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ

ການສ້າງຕັ້ງ ແລະ ການດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ;
2. ຂໍອະນຸຍາດປຸກສ້າງສະຖານທີ່ວາງຈຳໜ່າຍຍານພາຫະນະທາງບົກ;
3. ຂໍອະນຸຍາດດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ.

### ມາດຕາ 19 ການແຈ້ງຂຶ້ນທະບຽນວິສາຫະກິດຂອງທຸລະກິດການຈຳໜ່າຍຍານພາຫະນະທາງບົກ

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ທຶນຈົດທະບຽນວິສາຫະກິດຂອງທຸລະກິດການຈຳໜ່າຍຍານພາຫະນະທາງບົກ ໃຫ້ປະຕິບັດ ດັ່ງນີ້:

1. ໜຶ່ງຕື້ ກີບ ຂຶ້ນໄປ ສຳລັບຍານພາຫະນະ ທີ່ມີສອງ ຫຼື ສາມລໍ້;
2. ຫ້າສິບຕື້ ກີບ ຂຶ້ນໄປ ສຳລັບຍານພາຫະນະ ທີ່ມີສີ່ລໍ້ ຂຶ້ນໄປ.

### ມາດຕາ 20 ການຂໍອະນຸຍາດປຸກສ້າງສະຖານທີ່ວາງຈຳໜ່າຍຍານພາຫະນະທາງບົກ

ພາຍຫຼັງໄດ້ໃບທະບຽນວິສາຫະກິດແລ້ວ ໃຫ້ສະເໜີຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ເພື່ອຂໍອະນຸຍາດປຸກສ້າງສະຖານທີ່ວາງຈຳໜ່າຍຍານພາຫະນະທາງບົກ ໂດຍຖືກຕ້ອງຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ເງື່ອນໄຂຂອງບໍລິສັດແມ່.

### ມາດຕາ 21 ການຂໍອະນຸຍາດດຳເນີນກິດຈະການການຈຳໜ່າຍຍານພາຫະນະທາງບົກ

ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດ ແລະ ໃບອະນຸຍາດປຸກສ້າງແລ້ວ ກ່ອນເຄື່ອນໄຫວທຸລະກິດ ຕ້ອງຂໍອະນຸຍາດດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ ຕາມລະບຽບການ ທີ່ກະຊວງອຸດສາ ຫະກຳ ແລະ ການຄ້າ ໄດ້ວາງອອກ.

ການສະເໜີອອກໃບອະນຸຍາດດຳເນີນທຸລະກິດ ການຈຳໜ່າຍຍານພາຫະນະທາງບົກ ປະກອບມີເອກະສານຕົ້ນຕໍ ຄືດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມແບບພິມ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ;
2. ໃບອະນຸຍາດປຸກສ້າງສະຖານທີ່ວາງຈຳໜ່າຍຍານພາຫະນະທາງບົກ;
3. ໃບທະບຽນວິສາຫະກິດ;
4. ໜັງສືແນະນຳການຂໍອະນຸຍາດດຳເນີນທະລະກິດ ທີ່ອອກໂດຍພາກສ່ວນອອກໃບທະບຽນວິສາ ຫະກິດ.

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ເຈົ້າໜ້າທີ່ກ່ຽວຂ້ອງຕ້ອງອອກໃບອະນຸຍາດດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ ຊ້າສຸດບໍ່ໃຫ້ເກີນ ຫ້າ ວັນ ລັດຖະການ ນັບແຕ່ມື້ອອກ ໃບຮັບເອກະສານເປັນຕົ້ນໄປ.

### ມາດຕາ 22 ເງື່ອນໄຂການດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ

ການດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບອະນຸຍາດດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ ທີ່ມີຜົນບັງຄັບໃຊ້;
2. ຖືບັນຊີຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍແຍກບັນຊີຂາຍຍົກ ແລະ ຂາຍຍ່ອຍ ຖ້າດຳເນີນກິດຈະການທັງສອງກິດຈະການ;
3. ມີບັນຊີເງິນຝາກຢູ່ທະນາຄານ ທີ່ຕັ້ງ ຢູ່ ສປປ ລາວ;

4. ມີສະຖານທີ່ວາງຈໍາໜ່າຍ ແລະ ມີສາງເກັບຮັກສາຍານພາຫະນະທາງບົກ ຕາມເງື່ອນໄຂ ແລະ ມາດຕະຖານທີ່ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;

5. ມີສັນຍາເປັນຕົວແທນຈໍາໜ່າຍກັບວິສາຫະກິດການນໍາເຂົ້າ ແລະ ສົ່ງອອກ, ຜູ້ຜະລິດ ແລະ/ຫຼື ຜູ້ປະກອບ ຍານພາຫະນະທາງບົກ ຍົກເວັ້ນທຸລະກິດການຈໍາໜ່າຍຍານພາຫະນະທາງບົກທີ່ນໍາໃຊ້ແລ້ວ.

ທຸລະກິດການຈໍາໜ່າຍຍານພາຫະນະທາງບົກ ທີ່ໄດ້ຮັບການສ້າງຕັ້ງ ແລະ ດໍາເນີນ ກ່ອນດໍາລັດສະບັບນີ້ ຕ້ອງປັບປຸງໃຫ້ສອດຄ່ອງ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕານີ້ ພາຍໃນກໍານົດເວລາ ໜຶ່ງ ປີ ນັບແຕ່ວັນທີ່ ດໍາລັດສະບັບນີ້ ມີຜົນບັງຄັບໃຊ້ເປັນຕົ້ນໄປ.

## ໝວດທີ 3
## ການສ້າງຕັ້ງ ແລະ ການດໍາເນີນທຸລະກິດ
## ການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ

**ມາດຕາ 23 ຂັ້ນຕອນການສ້າງຕັ້ງ ແລະ ການດໍາເນີນທຸລະກິດ ການຜະລິດ ແລະ/ຫຼື ການປະກອບ ຍານພາຫະນະທາງບົກ**

ການສ້າງຕັ້ງ ແລະ ການດໍາເນີນທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ໃຫ້ປະຕິບັດຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ການດໍາເນີນທຸລະກິດ ການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ສາມາດຜະລິດຊິ້ນສ່ວນ, ນໍາເຂົ້າ ຫຼື ຊື້ ຊິ້ນສ່ວນ ຈາກຜູ້ຜະລິດຊິ້ນສ່ວນ ຢູ່ພາຍໃນ ຫຼື ຕ່າງປະເທດ ເພື່ອມາຜະລິດ ແລະ/ຫຼື ປະກອບ ເປັນຊິ້ນສ່ວນ ຫຼື ເປັນຄັນ.

**ມາດຕາ 24 ການນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ**

ການນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ ແມ່ນ ການນໍາເຂົ້າຊິ້ນສ່ວນ ຕາມຮູບແບບທີ່ກໍານົດໃນມາດຕາ 31 ຂອງດໍາລັດສະບັບນີ້ ເພື່ອສະໜອງແກ່ການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ຢູ່ ສປປ ລາວ.

ການນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ ຕ້ອງມີແຫຼ່ງທີ່ມາຊັດເຈນ, ນໍາເຂົ້າຜ່ານດ່ານສາກົນ ໂດຍສອດຄ່ອງຕາມແຜນການເຄື່ອນໄຫວປະຈໍາປີ. ຊິ້ນສ່ວນທີ່ນໍາເຂົ້າ ບໍ່ສາມາດນໍາໄປຈໍາໜ່າຍ ຫຼື ນໍາໃຊ້ຢ່າງອື່ນທີ່ບໍ່ຖືກຕ້ອງ ຕາມແຜນການເຄື່ອນໄຫວປະຈໍາປີ.

ຜູ້ຜະລິດ ແລະ/ຫຼື ຜູ້ປະກອບຍານພາຫະນະທາງບົກ ຕ້ອງມີແຜນການເຄື່ອນໄຫວປະຈໍາປີ ໂດຍມີການຢັ້ງຢືນຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ.

**ມາດຕາ 25 ການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະໃນໂຮງງານ**

ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ການປະກອບຍານພາຫະນະໃນໂຮງງານ ແມ່ນເອກະສານ ຢັ້ງຢືນຂະບວນການຜະລິດ, ການປະກອບພາຍໃນໂຮງງານ ໂດຍການກໍານົດລາຍການຊິ້ນສ່ວນທີ່ສາມາດ ຜະລິດ, ລາຍການຊິ້ນສ່ວນທີ່ນໍາມາປະກອບໃນໂຮງງານ.

ຂັ້ນຕອນການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ການປະກອບຍານພາຫະນະໃນໂຮງງານ ໃຫ້ປະຕິບັດຕາມລະບຽບການ ທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ວາງອອກ ໃນແຕ່ລະໄລຍະ.

## ໝວດທີ 4
## ສາຂາວິສາຫະກິດຍານພາຫະນະທາງບົກ

**ມາດຕາ 26 ສາຂາວິສາຫະກິດຍານພາຫະນະທາງບົກ**

ສາຂາວິສາຫະກິດຍານພາຫະນະທາງບົກ ແມ່ນ ສ່ວນໜຶ່ງໃນໂຄງປະກອບຂອງວິສາຫະກິດແມ່ ທີ່ຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ ຊຶ່ງບໍ່ມີຖານະເປັນນິຕິບຸກຄົນ ທີ່ແຍກອອກຈາກ ວິສາຫະກິດແມ່ ແລະ ສາມາດເຄື່ອນໄຫວໄດ້ ຕາມຂອບເຂດສິດ ທີ່ວິສາຫະກິດແມ່ ມອບໝາຍໃຫ້ ເທົ່ານັ້ນ.

ສາຂາວິສາຫະກິດຍານພາຫະນະທາງບົກ ແມ່ນບໍ່ສາມາດນໍາເຂົ້າ ຫຼື ສົ່ງອອກຍານພາຫະນະທາງບົກໄດ້ ແລະ ຕ້ອງຈໍາໜ່າຍຍານພາຫະນະທາງບົກ ຂອງວິສາຫະກິດແມ່ ຂອງຕົນເທົ່ານັ້ນ.

**ມາດຕາ 27 ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສາຂາວິສາຫະກິດຍານພາຫະນະທາງບົກ**

ການສ້າງຕັ້ງສາຂາວິສາຫະກິດຍານພາຫະນະທາງບົກ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສະເໜີຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ອອກໃບທະບຽນວິສາຫະກິດ ຂອງວິສາຫະກິດແມ່ ເພື່ອລະບຸສາຂາໃສ່ດ້ານຫຼັງໃບທະບຽນວິສາຫະກິດ;
2. ພາຍຫຼັງໄດ້ຮັບການລະບຸສາຂາໃສ່ດ້ານຫຼັງໃບທະບຽນວິສາຫະກິດແລ້ວ ໃຫ້ປະກອບເອກະສານສະເໜີຕໍ່ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ສ້າງຕັ້ງສາຂາ ເພື່ອຂໍໃບຢັ້ງຢືນການລົງທະບຽນສ້າງຕັ້ງສາຂາ.
3. ພາຍຫຼັງໄດ້ຮັບໃບຢັ້ງຢືນການລົງທະບຽນສ້າງຕັ້ງສາຂາ ທີ່ອອກໃຫ້ໂດຍ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລ້ວ ຈຶ່ງສາມາດເຄື່ອນໄຫວໄດ້ ແລະ ຕ້ອງເຄື່ອນໄຫວພາຍໃຕ້ ການຄຸ້ມຄອງ ແລະ ຕິດຕາມກວດກາ ຂອງເຈົ້າໜ້າທີ່ ຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢູ່ ແຂວງ, ນະຄອນຫຼວງ ບ່ອນທີ່ສາຂາຕັ້ງຢູ່.

ເອກະສານປະກອບ ແລະ ຂັ້ນຕອນລະອຽດຂອງການພິຈາລະນາ ສ້າງຕັ້ງສາຂາວິສາຫະກິດຍານພາຫະນະທາງບົກ ແມ່ນ ໃຫ້ປະຕິບັດຄືການສ້າງຕັ້ງສາຂາທຸລະກິດອື່ນ ຕາມລະບຽບການ ທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ວາງອອກໃນແຕ່ລະໄລຍະ.

# ພາກທີ IV
# ມາດຕະຖານເຕັກນິກຍານພາຫະນະ ແລະ ຊິ້ນສ່ວນຍານພາຫະນະ ທາງບົກ

**ມາດຕາ 28 ມາດຕະຖານເຕັກນິກຂອງຍານພາຫະນະທາງບົກ**

ມາດຕະຖານເຕັກນິກຂອງຍານພາຫະນະທາງບົກ ແມ່ນ ເງື່ອນໄຂກໍານົດດ້ານຄຸນລັກສະນະສະເພາະຂອງຍານພາຫະນະ ທີ່ຜ່ານຂະບວນການຜະລິດ ແລະ ປະກອບ, ຈັດແບ່ງປະເພດ, ຂະໜາດ, ນໍ້າໜັກ ແລະ ກໍານົດຈຸດປະສົງຂອງການນໍາໃຊ້.

ຍານພາຫະນະທາງບົກທຸກຊະນິດ ທີ່ຜະລິດ, ປະກອບ ເພື່ອຂຶ້ນທະບຽນ ແລະ ນຳໃຊ້ ຢູ່ ສປປ ລາວ ຕ້ອງ ມີຄຸນນະພາບ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ຍານພາຫະນະທຸກຊະນິດ ທີ່ນຳເຂົ້າ ເພື່ອຂຶ້ນທະບຽນ ແລະ ນຳໃຊ້ ຢູ່ ສປປ ລາວ ຕ້ອງມີຄຸນນະພາບ ທີ່ຖືກຕ້ອງຕາມມາດຕະຖານ ທີ່ເປັນທີ່ຍອມຮັບໃນລະດັບພາກພື້ນ ແລະ ສາກົນ, ສອດຄ່ອງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງ ສປປ ລາວ ຫຼື ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ມາດຕາ 29 ການຢັ້ງຢືນມາດຕະຖານ ແລະ ເຕັກນິກຍານພາຫະນະທາງບົກ

ການນຳເຂົ້າ ຫຼື ຜະລິດ, ປະກອບ ຍານພາຫະນະທາງບົກ ຢູ່ ສປປ ລາວ ກ່ອນຈະຈຳໜ່າຍ ແລະ ຂຶ້ນທະບຽນ ຕ້ອງໄດ້ຮັບການຢັ້ງຢືນມາດຕະຖານ ແລະ ເຕັກນິກຍານພາຫະນະທາງບົກ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

ຂັ້ນຕອນການອອກໃບຢັ້ງຢືນມາດຕະຖານ ແລະ ເຕັກນິກຍານພາຫະນະທາງບົກ ໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຈະລາຈອນທາງບົກ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 30 ມາດຕະຖານຊິ້ນສ່ວນຍານພາຫະນະທາງບົກ

ມາດຕະຖານຊິ້ນສ່ວນຍານພາຫະນະທາງບົກ ແມ່ນ ການກຳນົດດ້ານຄຸນລັກສະນະສະເພາະຂອງຍານພາຫະນະທາງບົກ ທີ່ຜ່ານຂະບວນການຜະລິດ ແລະ ປະກອບ, ຈັດແບ່ງປະເພດ, ຂະໜາດ, ນ້ຳໜັກ ແລະ ກຳນົດຈຸດປະສົງຂອງການນຳໃຊ້.

## ມາດຕາ 31 ຄຸນນະພາບຊິ້ນສ່ວນຍານພາຫະນະທາງບົກ

ຊິ້ນສ່ວນຍານພາຫະນະທາງບົກ ທີ່ນຳມາປະກອບເປັນຍານພາຫະນະຢູ່ໃນໂຮງງານ ຕ້ອງເປັນຊິ້ນສ່ວນ ທີ່ຍັງບໍ່ທັນໄດ້ນຳໃຊ້ມາກ່ອນ, ຕ້ອງມີເອກະສານຢັ້ງຢືນ ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບຈາກ ໂຮງງານຜະລິດຊິ້ນສ່ວນດັ່ງກ່າວ.

ສຳລັບຊິ້ນສ່ວນຍານພາຫະນະ ທີ່ມີຜົນຕໍ່ຄວາມປອດໄພ ຫຼື ລະບົບປະສິດທິພາບຂອງຍານພາຫະນະ ຕ້ອງໄດ້ຮັບການກວດກາ, ກວດສອບດ້ານຄຸນນະພາບຂອງຜະລິດຕະພັນ ຈາກຫ້ອງທົດລອງຂອງອົງການທີ່ສາກົນຮັບຮອງ ຢູ່ພາຍໃນ ຫຼື ຕ່າງປະເທດ ແລະ ໄດ້ຮັບການຢັ້ງຢືນຄຸນນະພາບ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າກຳນົດລາຍການຊິ້ນສ່ວນຍານພາຫະນະທີ່ມີຜົນຕໍ່ຄວາມປອດໄພ ຫຼື ລະບົບປະສິດທິພາບຂອງຍານພາຫະນະ.

## ມາດຕາ 32 ຮູບແບບຊິ້ນສ່ວນຍານພາຫະນະທາງບົກ

ຊິ້ນສ່ວນຍານພາຫະນະທາງບົກ ເພື່ອນຳເຂົ້າ, ຜະລິດ ແລະ/ຫຼື ປະກອບເປັນຍານພາຫະນະ ຈາກຜູ້ຜະລິດ, ຜູ້ປະກອບຍານພາຫະນະ ປະກອບມີ ສາມ ຮູບແບບ ຄື: ເອັສເຄດີ (SKD), ຊີເຄດີ (CKD) ແລະ ໄອເຄດີ (IKD).

# ພາກທີ V
# ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດຍານພາຫະນະທາງບົກ

**ມາດຕາ 33 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ**

ຜູ້ດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ມີ ສິດ ດັ່ງນີ້:

1. ນຳເຂົ້າຍານພາຫະນະທາງບົກທີ່ຕົນເປັນຕົວແທນ ຫຼື ນຳເຂົ້າຍານພາຫະນະທາງບົກທີ່ຍັງບໍ່ທັນມີຕົວແທນຈຳໜ່າຍຢູ່ ສປປ ລາວ ເພື່ອຂາຍຍົກໃຫ້ຜູ້ຈຳໜ່າຍຍານພາຫະນະທາງບົກຢູ່ພາຍໃນ, ສົ່ງອອກ ແລະ ສົ່ງອອກຕໍ່;
2. ຊື້ຍານພາຫະນະທາງບົກຈາກຜູ້ຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ຢູ່ພາຍໃນ ເພື່ອຈຳໜ່າຍຢູ່ພາຍໃນ ຫຼື ສົ່ງອອກ;
3. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນ ໃນການດຳເນີນທຸລະກິດຍານພາຫະນະທາງບົກ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ມີ ພັນທະ ດັ່ງນີ້:

1. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ໂດຍແຍກບັນຊີລະອຽດຕາມກິດຈະການ;
2. ຮັບປະກັນທາງດ້ານຄຸນນະພາບ, ມາດຕະຖານເຕັກນິກຂອງຍານພາຫະນະທາງບົກ ທີ່ນຳເຂົ້າ ແລະ ຈຳໜ່າຍ;
3. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ຫຼື ຮຽກເກັບຄືນຍານພາຫະນະທາງບົກທີ່ຕົນນຳເຂົ້າ ທີ່ບໍ່ໄດ້ຄຸນນະພາບ, ມາດຕະຖານເຕັກນິກ ທີ່ຂະແໜງການກ່ຽວຂ້ອງວາງອອກ;
4. ຊຸກຍູ້ ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງ ໃນການໃຫ້ບໍລິການຫຼັງການຂາຍ;
5. ໂຄສະນາເຜີຍແຜ່ໃຫ້ມວນຊົນຮັບຮູ້ ກ່ຽວກັບການນຳໃຊ້ຍານພາຫະນະທາງບົກ ແລະ ການຂັບຂີ່ຢ່າງປອດໄພ;
6. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດໃນການກວດກາການດຳເນີນທຸລະກິດຍານພາຫະນະທາງບົກ;
7. ເສຍພາສີ, ອາກອນ ແລະ ພັນທະອື່ນໃຫ້ລັດ ຕາມກົດໝາຍ;
8. ລາຍງານການນຳເຂົ້າ, ການຈຳໜ່າຍຍານພາຫະນະ ປະຈຳງວດ ແລະ ປີ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ;
9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 34 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ**

ຜູ້ດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ ມີ ສິດ ດັ່ງນີ້:

1. ຊື້ ຫຼື ເປັນຕົວແທນຈຳໜ່າຍຍານພາຫະນະທາງບົກ ໃຫ້ແກ່ວິສາຫະກິດນຳເຂົ້າ ແລະ ສົ່ງອອກ, ຜູ້ຜະລິດ, ປະກອບ ຍານພາຫະນະທາງບົກ ພາຍໃນ ເພື່ອຈຳໜ່າຍ;
2. ຊື້, ຂາຍ ຫຼື ແລກປ່ຽນ ຍານພາຫະນະທາງບົກ ທີ່ຜ່ານການນຳໃຊ້ແລ້ວ;
3. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນ ໃນການດຳເນີນທຸລະກິດຍານພາຫະນະທາງບົກ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ ມີ ພັນທະ ດັ່ງນີ້:

1. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;
2. ໃຫ້ບໍລິການຫຼັງການຂາຍແກ່ລູກຄ້າຂອງຕົນ ຕາມກຳນົດເວລາ ແລະ ເງື່ອນໄຂທີ່ຕົກລົງກັນ;
3. ຮັບປະກັນຄຸນນະພາບຂອງຍານພາຫະນະທາງບົກ ທີ່ຕົນຈຳໜ່າຍໃຫ້ລູກຄ້າ;
4. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການກວດກາການດຳເນີນທຸລະກິດຍານພາຫະນະທາງບົກ;
5. ເສຍພາສີ, ອາກອນ ແລະ ພັນທະອື່ນ ໃຫ້ລັດຕາມກົດໝາຍ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 35 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ**

ຜູ້ດຳເນີນທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ມີ ສິດ ດັ່ງນີ້:

1. ນຳເຂົ້າຊິ້ນສ່ວນ ຫຼື ວັດຖຸດິບ ເພື່ອມາຜະລິດ ແລະ/ຫຼື ປະກອບຢູ່ໃນໂຮງງານຂອງຕົນ;
2. ໄດ້ຮັບນະໂຍບາຍສົ່ງເສີມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
3. ຈຳໜ່າຍໃຫ້ຜູ້ດຳເນີນທຸລະກິດຍານພາຫະນະທາງບົກ ຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ;
4. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນ ໃນການດຳເນີນທຸລະກິດຍານພາຫະນະທາງບົກ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ດຳເນີນທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ມີ ພັນທະ ດັ່ງນີ້:

1. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;
2. ໃຫ້ບໍລິການຫຼັງການຂາຍແກ່ລູກຄ້າຂອງຕົນ;
3. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ຫຼື ຮຽກເກັບຄືນຍານພາຫະນະທາງບົກ ທີ່ຜະລິດຈາກໂຮງງານຕົນ ທີ່ບໍ່ໄດ້ຄຸນນະພາບ ແລະ ມາດຕະຖານ ທີ່ຂະແໜງການກ່ຽວຂ້ອງວາງອອກ;
4. ໂຄສະນາ ເຜີຍແຜ່ ໃຫ້ນອນຊົນຮັບຮູ້ ກ່ຽວກັບການນຳໃຊ້ຍານພາຫະນະທາງບົກ ແລະ ການຂັບຂີ່ຢ່າງປອດໄພ;
5. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການກວດກາການດຳເນີນທຸລະກິດຍານພາຫະນະທາງບົກ;
6. ເສຍພາສີ, ອາກອນ ແລະ ພັນທະອື່ນໃຫ້ລັດ ຕາມກົດໝາຍ;
7. ລາຍງານການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ປະຈຳງວດ ແລະ ປີ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ;
8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ສະມາຄົມອຸດສາຫະກຳຍານພາຫະນະທາງບົກ

**ມາດຕາ 36 ສະມາຄົມອຸດສາຫະກຳຍານພາຫະນະທາງບົກ**

ສະມາຄົມອຸດສາຫະກຳຍານພາຫະນະທາງບົກ ແມ່ນ ອົງການຈັດຕັ້ງສັງຄົມທີ່ບໍ່ຫວັງຜົນກຳໄລ ຊຶ່ງສ້າງຕັ້ງຂຶ້ນ ເພື່ອເຕົ້າໂຮມເອົາບັນດາຫົວໜ່ວຍທຸລະກິດຍານພາຫະນະທາງບົກ, ມີພາລະບົດບາດປະສານ

ສົມທົບກັບອົງການຄຸ້ມຄອງ ແລະ ກວດກາທຸລະກິດຍານພາຫະນະທາງບົກ, ໃຫ້ການຊ່ວຍເຫຼືອ, ໃຫ້ຄຳປຶກສາ, ໃຫ້ຄຳແນະນຳ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກ.

**ມາດຕາ 37 ສິດ ແລະ ໜ້າທີ່ຂອງສະມາຄົມອຸດສາຫະກຳຍານພາຫະນະທາງບົກ**

ສະມາຄົມອຸດສາຫະກຳຍານພາຫະນະທາງບົກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ນິຕິກຳ ແລະ ຂໍ້ມູນຂ່າວສານ ກ່ຽວກັບທຸລະກິດຍານພາຫະນະທາງບົກ ໃຫ້ສະມາຊິກ;
2. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບການສ້າງ ແລະ ປັບປຸງນິຕິກຳກ່ຽວກັບທຸລະກິດຍານພາຫະນະທາງບົກ;
3. ເປັນຂົວຕໍ່ ລະຫວ່າງອົງການຄຸ້ມຄອງ ແລະ ກວດກາທຸລະກິດຍານພາຫະນະທາງບົກ ແລະ ສະມາຊິກ;
4. ໄດ້ຮັບຂໍ້ມູນຈາກສະມາຊິກຂອງສະມາຄົມ ແລະ ອົງການຄຸ້ມຄອງ ແລະ ກວດກາທຸລະກິດຍານພາຫະນະທາງບົກ;
5. ຕິດຕາມການເຄື່ອນໄຫວຂອງສະມາຊິກ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
6. ໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງສະມາຊິກດ້ວຍກັນ;
7. ສະເໜີຍ້ອງຍໍສະມາຊິກທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວທຸລະກິດ, ປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;
8. ສັງລວມ ແລະ ລາຍງານ ການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຍານພາຫະນະທາງບົກ ປະຈຳປີຕໍ່ອົງການຄຸ້ມຄອງ ແລະ ກວດກາທຸລະກິດຍານພາຫະນະທາງບົກ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນ.

**ມາດຕາ 38 ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມອຸດສາຫະກຳຍານພາຫະນະທາງບົກ**

ສຳລັບໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມອຸດສາຫະກຳຍານພາຫະນະທາງບົກ ລວມທັງລະບອບແບບແຜນວິທີເຮັດວຽກ ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ ທີ່ໄດ້ຜ່ານການຮັບຮອງຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 39 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຄຸ້ມຄອງ ແລະ ກວດກາທຸລະກິດຍານພາຫະນະທາງບົກ;
2. ດຳເນີນທຸລະກິດຍານພາຫະນະທາງບົກ ໂດຍບໍ່ໄດ້ຮັບອະນຸຍາດ;
3. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດ;
4. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 40 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດການນໍາເຂົ້າ ແລະ ສົ່ງອອກ ຍານພາຫະນະທາງບົກ**

ຫ້າມ ຜູ້ດໍາເນີນທຸລະກິດການນໍາເຂົ້າ ແລະ ສົ່ງອອກ ມີ ພຶດຕິກໍາ ດັ່ງນີ້:

1. ນໍາເຂົ້າ ແລະ ສົ່ງອອກ ຍານພາຫະນະທາງບົກ ໂດຍບໍ່ໄດ້ຮັບອະນຸຍາດ;

2. ນໍາເຂົ້າ, ສົ່ງອອກ ແລະ ຈໍາໜ່າຍຍານພາຫະນະທາງບົກ ທີ່ບໍ່ໄດ້ມາດຕະຖານ;

3. ນໍາເຂົ້າ, ສົ່ງອອກ ແລະ ຈໍາໜ່າຍຍານພາຫະນະທາງບົກ ໂດຍບໍ່ໄດ້ເສຍພັນທະ ຫຼື ເສຍພັນ ທະບໍ່ຄົບຖ້ວນ;

4. ມອບສິດໃຫ້ຜູ້ດໍາເນີນທຸລະກິດຈໍາໜ່າຍຍານພາຫະນະທາງບົກ ພາຍໃນ ຫຼື ບຸກຄົນໃດໜຶ່ງ ນໍາເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ;

5. ເອົາໃບທະບຽນວິສາຫະກິດ ແລະ ເອກະສານຕ່າງໆ ຂອງວິສາຫະກິດຕົນໃຫ້ບຸກຄົນອື່ນນໍາໃຊ້;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 41 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດຈໍາໜ່າຍຍານພາຫະນະທາງບົກ**

ຫ້າມ ຜູ້ດໍາເນີນທຸລະກິດການຈໍາໜ່າຍຍານພາຫະນະທາງບົກ ມີພຶດຕິກໍາ ດັ່ງນີ້:

1. ນໍາເຂົ້າ, ສົ່ງອອກ ຫຼື ນໍາເຂົ້າເພື່ອສົ່ງອອກຕໍ່ ຍານພາຫະນະທາງບົກ;

2. ປຸກສ້າງສະຖານທີ່ວາງຈໍາໜ່າຍຍານພາຫະນະທາງບົກ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຫຼື ປຸກສ້າງບໍ່ຖືກຕ້ອງ ຕາມເງື່ອນໄຂຂອງບໍລິສັດແມ່, ກົດໝາຍ ແລະ ບຽບການຂອງ ສປປ ລາວ;

3. ເອົາໃບທະບຽນວິສາຫະກິດ ແລະ ເອກະສານຕ່າງໆຂອງວິສາຫະກິດຕົນ ໃຫ້ບຸກຄົນອື່ນນໍາໃຊ້;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 42 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ**

ຫ້າມ ຜູ້ດໍາເນີນທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ມີພຶດຕິກໍາດັ່ງນີ້:

1. ສ້າງຕັ້ງ, ໂຍກຍ້າຍໂຮງງານ, ດໍາເນີນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

2. ດໍາເນີນກິດຈະການໂດຍບໍ່ສອດຄ່ອງກັບໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ການປະກອບ ຍານພາຫະນະທາງບົກໃນໂຮງງານ;

3. ຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ໂດຍບໍ່ໄດ້ມາດຕະຖານ ແລະ ຄຸນນະພາບ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 43 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ມີພຶດຕິກໍາດັ່ງນີ້:

1. ສວຍໃຊ້ອໍານາດ, ຕໍາແໜ່ງ ຫຼື ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;

2. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຕໍ່ຜູ້ດຳເນີນທຸລະກິດຍານພາຫະນະທາງບົກ;

3. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;

4. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ຫຼື ບິດເບືອນຄວາມຈິງ;

5. ປົດບັງ, ປົກປ້ອງ ຫຼື ໃຫ້ຄວາມຮ່ວມມື ແກ່ຜູ້ກະທຳຄວາມຜິດ;

6. ປອມແປງເອກະສານ ຫຼື ໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບທຸລະກິດ ໂດຍບໍ່ໄດ້ຮັບ ອະນຸຍາດ ຈາກຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ;

7. ອະນຸຍາດດຳເນີນທຸລະກິດຍານພາຫະນະທາງບົກ ໂດຍບໍ່ຖືກຕ້ອງຕາມເງື່ອນໄຂ ແລະ ຂັ້ນຕອນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VIII
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 44 ອົງການຄຸ້ມຄອງ ແລະ ກວດກາທຸລະກິດຍານພາຫະນະທາງບົກ**

ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານທຸລະກິດຍານພາຫະນະທາງບົກ.

**ມາດຕາ 45 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະການຄ້າ**

ໃນການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງທົ່ວເຖິງ;

3. ພິຈາລະນາການຂໍອະນຸຍາດນຳເຂົ້າ, ສົ່ງອອກ, ນຳເຂົ້າເພື່ອສົ່ງອອກຕໍ່ ແລ້ວແຈ້ງໃຫ້ຂະແໜງການການເງິນຮັບຊາບ;

4. ພິຈາລະນາການສະເໜີສ້າງຕັ້ງ, ອອກໃບອະນຸຍາດດຳເນີນທຸລະກິດ, ສັ່ງໂຈະ ຫຼື ຢຸດເຊົາການດຳເນີນທຸລະກິດຍານພາຫະນະທາງບົກ;

5. ປະສານສົມທົບກັບຂະແໜງການກ່ຽວຂ້ອງຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ເພື່ອກຳນົດ ແລະ ດັດສົມຫົວໜ່ວຍທຸລະກິດການນຳເຂົ້າ ແລະ ສົ່ງອອກ, ຈຳໜ່າຍຍານພາຫະນະທາງບົກ ໃຫ້ເໝາະສົມ ຕາມສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

6. ຮັບພິຈາລະນາແກ້ໄຂຄຳສະເໜີຂອງຜູ້ດຳເນີນທຸລະກິດຍານພາຫະນະທາງບົກ ແລະ ຜູ້ຊົມໃຊ້;

7. ຄົ້ນຄວ້າມອບສິດໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ ໃນການອະນຸຍາດສ້າງຕັ້ງ ແລະ ຄຸ້ມຄອງການເຄື່ອນໄຫວທຸລະກິດຍານພາຫະນະທາງບົກ ຕາມຄວາມເໝາະສົມ;

8. ຊີ້ນຳສະມາຄົມອຸດສາຫະກຳຍານພາຫະນະທາງບົກ ໃຫ້ດຳເນີນຢ່າງເປັນປົກກະຕິ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດຍານພາຫະນະທາງບົກ ໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 46 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບການປຸກສ້າງ, ບ່ອນຈຳໜ່າຍ, ການຂົນສົ່ງ ຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບການປຸກສ້າງ, ບ່ອນຈຳໜ່າຍ, ການ ຂົນສົ່ງຍານພາຫະນະ ໃຫ້ສັງຄົມ ຢ່າງທົ່ວເຖິງ;

3. ພິຈາລະນາການສະເໜີປຸກສ້າງ, ສັ່ງໂຈະ ຫຼື ຢຸດເຊົາ ການອະນຸຍາດສະຖານທີ່ວາງຈຳໜ່າຍ ຍານ ພາຫະນະທາງບົກ;

4. ກຳນົດເຕັກນິກຍານພາຫະນະທາງບົກ;

5. ປະສານສົມທົບກັບຂະແໜງການຕ່າງໆທີ່ກ່ຽວຂ້ອງກັບທຸລະກິດຍານພາຫະນະທາງບົກ;

6. ຄົ້ນຄວ້າ ມອບສິດໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ໃນການຄຸ້ມຄອງດ້ານເຕັກນິກ ແລະ ຄຸນນະ ພາບ ຍານພາຫະນະທາງບົກ ຕາມຄວາມເໝາະສົມ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃນການສົ່ງເສີມ, ສະໜັບ ສະໜູນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດຍານພາຫະນະທາງບົກ ໂດຍປະສານ ສົມທົບ, ຮ່ວມມືກັບຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມພາລະບົດບາດ ແລະ ຂອບເຂດ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 48 ເນື້ອໃນກວດກາ**

ການກວດກາການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງທຸລະກິດຍານພາ ຫະນະທາງບົກ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງ ແລະ ກວດກາທຸລະກິດຍານພາຫະ ນະທາງບົກ;

3. ການເຄື່ອນໄຫວຂອງເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານຄຸ້ມ ຄອງທຸລະກິດຍານພາຫະນະທາງບົກ.

ມາດຕາ 49 ຮູບການກວດກາ

ການກວດກາວຽກງານຄຸ້ມຄອງທຸລະກິດພາຫະນະທາງບົກ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ຕາມແຜນການ ແລະ ມີກຳນົດເວລາ ອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ສອງ ຄັ້ງ ຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າ ມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາໃຫ້ດຳເນີນດ້ວຍການກວດກາທາງດ້ານເອກະສານ ແລະ ລົງກວດກາຕົວຈິງຢູ່ສະຖານ ທີ່ກ່ຽວຂ້ອງ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 50 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 51 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

ມາດຕາ 52 ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດລະບຽບການ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ທີ່ມີລັກສະນະເບົາ ແລະ ເປັນການລະເມີດເທື່ອທຳອິດ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ພ້ອມທັງເຮັດບົດບັນທຶກໄວ້.

ມາດຕາ 53 ມາດຕະການທາງດ້ານວິໄນ

ເຈົ້າໜ້າທີ່ ແລະ ພະນັກງານລັດທີ່ກ່ຽວຂ້ອງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມທີ່ກຳນົດໄວ້ໃນກົດໝາຍ.

ມາດຕາ 54 ມາດຕະການປັບໃໝ

ຜູ້ດຳເນີນທຸລະກິດຍານພາຫະນະທາງບົກ ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໃໝ ຕາມກໍລະນີ ດັ່ງນີ້:

1. ເອົາທະບຽນວິສາຫະກິດໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນນຳໃຊ້ ຈະຖືກຖອນທະບຽນວິສາ ຫະ ກິດ ແລະ ປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າທຶນຈົດທະບຽນຂອງວິສາຫະກິດ;

2. ມອບສິດໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນ ນຳເຂົ້າຍານພາຫະນະທາງບົກ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ ຈະຖືກຍຶດ ແລະ ປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່າຍານພາຫະນະທີ່ກວດພົບ;

3. ນຳເຂົ້າຍານພາຫະນະທາງບົກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກຍຶດ ແລະ ປັບໃໝ ສາມສິບ ສ່ວນຮ້ອຍ (30%) ຂອງມູນຄ່າຍານພາຫະນະທີ່ກວດພົບ;

4. ນຳເຂົ້າຊິ້ນສ່ວນ ບໍ່ສອດຄ່ອງຕາມທີ່ໄດ້ຮັບອະນຸຍາດ ຫຼື ບໍ່ສອດຄ່ອງກັບໃບຢັ້ງຢືນການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ຈະຖືກຍຶດ ແລະ ປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງ ມູນຄ່າຊິ້ນສ່ວນພາຫະນະທາງບົກທີ່ກວດພົບ;

5. ນຳເຂົ້າ ແລະ ຈຳໜ່າຍຍານພາຫະນະທາງບົກ ທີ່ບໍ່ໄດ້ມາດຖານເຕັກນິກ ຈະຖືກປັບໃໝ ແລະ ປະຕິບັດມາດຕະການອື່ນ ຕາມລະບຽບການຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ໄດ້ກຳນົດ.

ມາດຕາ 55 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.

ມາດຕາ 56 ມາດຕະການທາງອາຍາ

ບຸກຄົນໃດທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາຈະຖືກລົງໂທດ ຕາມກົດ ໝາຍອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

ມາດຕາ 57 ມາດຕະການໂທດເພີ່ມ

ນອກຈາກມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງດຳລັດສະບັບນີ້ ຜູ້ກະ ທຳຜິດ ຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ເປັນຕົ້ນການໂຈະ ຫຼື ຖອນໃບທະບຽນວິສາຫະກິດ.

## ພາກທີ X
## ບົດບັນຍັດສຸດທ້າຍ

ມາດຕາ 58 ການຈັດຕັ້ງປະຕິບັດ

ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າ ການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 59 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ການຈຳໜ່າຍພາຫະນະ, ສະບັບເລກທີ 96/ນຍ, ລົງວັນທີ 8/12/1992.

ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ